Minnesota Department of Education

# ຄຳຖາມທີ່ພົບເລື້ອຍໆ: ເປັນຫຍັງຈຶ່ງຕ້ອງມີຜົນການສອບເສັງໃນທົ່ວລັດ

## ການສອບເສັງໃນທົ່ວລັດແມ່ນຫຍັງ?

ການສອບເສັງໃນທົ່ວລັດ ແມ່ນວິທີການປະເມີນຜົນປະຈຳປີ ແລະ ສັງລວມເອົາຜົນສຳເລັດຂອງນັກຮຽນທີ່ໄດ້ນຳໃຊ້, ພ້ອມດ້ວຍ ການປະເມີນຜົນອື່ນໆຂອງໂຮງຮຽນ ແລະ ຫ້ອງຮຽນ ເພື່ອຕີລາຄາການຮຽນຮູ້ ແລະ ທັກສະຕ່າງໆຂອງນັກຮຽນ. ໂດຍສະເພາະ ການສອບເສັງໃນທົ່ວລັດຂອງມິນນີໂຊຕາ ບັນລຸການປະເມີນຜົນໃນມາດຕະຖານການສຶກສາຂອງມິນນີໂຊຕາ ທາງດ້ານຄະນິດສາດ, ຫັດອ່ານ ແລະ ວິທະຍາສາດ ແລະ ການພັດທະນາ ຄວາມສາມາດທາງດ້ານພາສາອັງກິດ ສຳລັບ ນັກຮຽນພາສາອັງກິດ. ແບບຟອມຂອງການປະເມີນຜົນຈຳນວນໜຶ່ງເກີດຂຶ້ນເປັນລາຍວັນ, ອັນອື່ນເກີດຂຶ້ນຢູ່ໃນຕອນທ້າຍ ຂອງຫົວໜ່ວຍຄຳແນະນຳ ແລະ ອັນອື່ນອີກ ຢູ່ໃນຕອນທ້າຍຂອງພາກຮຽນ ຫຼື ຫຼັກສູດຂອງໂຮງຮຽນ. ໂຮງຮຽນໃຊ້ການປະ ເມີນຜົນທີ່ມີເປົ້າໝາຍ ແລະ ມີມາດຕະຖານ ເພື່ອວັດການຮຽນຮູ້ຂອງນັກຮຽນຢ່າງມີເຫດຜົນຕໍ່ເກນມາດຕະຖານຂອງ ການບັນລຸຜົນທາງດ້ານການສຶກສາ. ໜ້າທີ່ຂອງການສອບເສັງໃນທົ່ວລັດມິນນີໂຊຕາ ເປັນສ່ວນໜຶ່ງຂອງລະບົບແບບຄົບວົງ ຈອນ ສຳລັບການຕີລາຄາການຮຽນຮູ້ຂອງນັກຮຽນ.

## ຂໍ້ມູນໃນການສອບເສັງໃນທົ່ວລັດຖືກນຳໃຊ້ໄດ້ແນວໃດ?

ຂໍ້ມູນຈາກການສອບເສັງໃນທົ່ວລັດຖືກນຳໃຊ້ໄດ້ຫຼາຍທາງ. ລັດໃຊ້ຜົນລວມຄະແນນຂອງການສອບເສັງ ເພື່ອລາຍງານໃຫ້ ມະຫາຊົນ ແລະ ພະແນກສຶກສາ (Department of Education) ຂອງສະຫະລັດ ເພື່ອບອກໃຫ້ຮູ້ວ່າ ນັກຮຽນຂອງມິນນີ ໂຊຕາ ມີຜົນການຮຽນຢູ່ໃນໂຮງຮຽນແບບໃດ. ຂໍ້ມູນຂອງການສອບເສັງທົ່ວລັດ ຊ່ວຍໃຫ້ລັດຕີລາຄາຄວາມກ້າວໜ້າ ທີ່ ໂຮງຮຽນມີເພື່ອຫຼຸດຜ່ອນຊ່ອງຫວ່າງໃນການບັນລຸຜົນໃນກຸ່ມຂອງນັກຮຽນ. ບັນດາໂຮງຮຽນ ແລະ ນັກຮຽນ ນຳໃຊ້ຜົນຂອງ ການປະເມີນ ເພື່ອວັດຄວາມຄືບໜ້າຂອງພວກເຂົາໃນການປັບປຸງການຮຽນຮູ້ຂອງນັກຮຽນເມື່ອເວລາຜ່ານໄປ. ຜູ້ໃຫ້ການ ສຶກສາ ໃຊ້ຄະແນນຂອງນັກຮຽນແຕ່ລະຄົນ ເພື່ອວັດແທກຄວາມເຂັ້ມແຂງທີ່ສຳພັນກັນຂອງນັກຮຽນ ແລະ ຂົງເຂດຄວາມ ຕ້ອງການ ແລະ ພວກເຂົາໃຊ້ຜົນລວມຂອງການສອບເສັງໃນການແກ້ໄຂຫລັກສູດ ແລະ ການສິດສອນ. ພໍ່ແມ່ໃຊ້ຄະແນນ ເຂົ້າໃນການຕັດສິນໃຈຂອງພວກເຂົາເມື່ອເວລາທີ່ພວກເຂົາເລືອກໂຮງຮຽນໃຫ້ແກ່ລູກຂອງພວກເຂົາ. ພໍ່ແມ່, ນັກຮຽນ ແລະ ຜູ້ໃຫ້ການສຶກສາ ຍັງອາດຈະໃຊ້ຜົນການສອບເສັງຂອງພວກເຂົາໃນການກຳນົດວ່າ ນັກຮຽນເຂົ້າຕາມແນວທາງ ທີ່ຈະເຮັດໃຫ້ ນັກຮຽນສາມາດບັນລຸຜົນການຮຽນໃນລະດັບຊັ້ນຮຽນ, ວິທະຍາໄລ ແລະ ປະກອບອາຊີບ. ສຳລັບເຫດຜົນເຫຼົ່ານີ້, ຮັບປະກັນ ຄວາມສົມບູນຂອງຂໍ້ມູນສອບເສັງໃນທົ່ວລັດແມ່ນຄວາມຮັບຜິດຊອບທີ່ສຳຄັນ ແລະ ຮ່ວມກັນ.

## ຄວາມມີເຫດຜົນຂອງຄະແນນການສອບເສັງແມ່ນຫຍັງ ແລະ ເປັນຫຍັງມັນຈຶ່ງມີຄວາມສຳຄັນ?

ຄວາມມີເຫດຜົນຂອງຄະແນນການສອບເສັງ ມີທັງຄວາມໝາຍທາງດ້ານວິຊາການ ແລະ ຄວາມໝາຍທົ່ວໄປ. ຊຸດຄູ່ມືວິຊາ ການ ທີ່ຮັບໂດຍຊ່ຽວຊານດ້ານການສອບເສັງ ໃຫ້ນິຍາມຄຳວ່າເຫດຜົນແມ່ນ "ລະດັບທີ່ເປັນຫຼັກຖານ... ສະໜັບສະໜູນການ ອະທິບາຍຂອງຄະແນນການສອບເສັງສຳລັບການນຳໃຊ້ການສອບເສັງທີ່ໄດ້ສະເໜີ" (ໜ້າ 11).[1]

---

[1]ສະຫະພັນການວິໄຈດ້ານການສຶກສາຂອງຄົນອາເມລິກາ (American Educational Research Association), ສະຫະພັນດ້ານ ຈິດຕະວິທະຍາຂອງຄົນອາເມລິກາ (American Psychological Association), ຄະນະກຳມະການແຫ່ງຊາດດ້ານການປະເມີນການ ສຶກສາ (National Council on Measurement in Education) (2014). *ມາດຕະຖານສຳລັບການສອບເສັງດ້ານການສຶກສາ ແລະ ຈິດຕະວິທະຍາ (Standards for Educational ແລະ Psychological Testing).* ວໍຊິງຕັນດີຊີ: ຜູ້ຂຽນ

ໃນຄຳສັບທີ່ໃຊ້ປະຈຳວັນ, ຄົນໜຶ່ງອາດຈະຄິດວ່າເຫດຜົນຂອງຄະແນນສອບເສັງແມ່ນການຕອບຄຳຖາມ, “ຂ້ອຍສາມາດເຊື່ອໝັ້ນວ່າ ຄະແນນການ ສອບເສັງນີ້ ບອກໃຫ້ຂ້ອຍວ່າ ມັນຮຽກຮ້ອງໃຫ້ບອກໃຫ້ວ່າຫຍັງ?” ຄະແນນສອບເສັງຖືກພິຈາລະນາວ່າ ມີເຫດຜົນ ຖ້າມັນເປັນໄປໄດ້ ທີ່ຈະດຶງການສະຫລຸບຜົນທີ່ຊັດເຈນກ່ຽວກັບຜົນສຳເລັດຂອງນັກຮຽນຈາກພວກເຂົາ. ຍົກຕົວຢ່າງ: ຖ້າວ່ານັກຮຽນໄດ້ຮັບຄະແນນການປະເມີນຜົນແບບສົມບູນຂອງມິນນີໂຊຕາ (Minnesota Comprehensive Assessments, MCA) ທີ່ລະບຸວ່າພວກເຂົາ “ໄດ້ຕາມເກນມາດຕະຖານ,” ມີເຫດຜົນທີ່ສະຫລຸບໄດ້ວ່າ ນັກຮຽນໄດ້ເຂົ້າໃຈຖ່ອງແທ້ເຖິງເນື້ອຫາ ແລະ ທັກສະທີ່ພຽງພໍໃນລະດັບຊັ້ນຮຽນຂອງການອ່ານ, ຄະນິດສາດ ຫຼື ວິທະຍາສາດ ເພື່ອກະກຽມໃຫ້ພຽງພໍສຳລັບເນື້ອໃນທີ່ຢູ່ໃນລະດັບຊັ້ນຮຽນຕໍ່ໄປ ຫຼື ລະດັບວິທະຍາໄລ ຫຼື ປະກອບອາຊີບ. ຄວາມຮູ້ ແລະ ທັກສະທີ່ພວກເຂົາເຂົ້າໃຈຖ່ອງແທ້ ສາມາດອະທິບາຍໄດ້ຢ່າງຖືກຕ້ອງ ແລະ ນັກຮຽນ, ພໍ່ແມ່ ແລະ ຜູ້ໃຫ້ການສຶກສາສາມາດໃຊ້ຂໍ້ມູນ ເພື່ອກຳນົດແຜນການໃນຂັ້ນຕໍ່ໄປ ສຳລັບຄວາມກ້າວໜ້າຂອງການສຶກສາ. ຄະແນນສອບເສັງທີ່ມີເຫດຜົນສາມາດຊ່ວຍກຳນົດຂົງເຂດຂອງຈຸດແຂງ ແລະ ຈຸດອ່ອນ ເຊິ່ງກັນແລະກັນ ເພື່ອໃຫ້ຜູ້ໃຫ້ການສຶກສາ ແລະ ພໍ່ແມ່ ຕິດຕາມ.

## ຕົວຢ່າງຂອງການເຄື່ອນໄຫວທີ່ມີຜົນກະທົບຕໍ່ຄວາມຖືກຕ້ອງຂອງຄະແນນສອບເສັງແມ່ນຫຍັງ?

ນຳໃຊ້ຜົນຂອງການສອບເສັງໃນຮູບແບບທີ່ມີຄວາມໝາຍ, ຄະແນນສອບເສັງຕ້ອງນຳສະເໜີຜົນສຳເລັດທີ່ບໍ່ໄດ້ຮັບການຊ່ວຍ ເຫຼືອຂອງນັກຮຽນແຕ່ລະຄົນ. ຄວາມຂີ້ໂກງຈະເປັນຜົນໃນການໃຫ້ຄະແນນຂອງການສອບເສັງ. ວິທີແບບສັ້ນໆທີ່ຄົນສໍ້ໂກງ ຫຼື ເຂົ້າໄປພົວພັນກັບຄວາມປະພຶດທີ່ບໍ່ຖືກຕ້ອງປະກອບດ້ວຍ:

- ນັກຮຽນໄດ້ຮັບຄວາມຊ່ວຍເຫຼືອ ຫຼື ຄຳຕອບຈາກນັກຮຽນຄົນອື່ນ
- ນັກຮຽນໄດ້ຮັບຄວາມຊ່ວຍເຫຼືອ ຫຼື ຄຳຕອບຈາກຜູ້ໃຫ້ການສິດສອນ ຫຼືພະນັກງານ
- ນັກຮຽນເບິ່ງຫຼືຝຶກແອບເຮັດບົດສອບເສັງຕົວຈິງກ່ອນຈະມີການສອບເສັງ
- ຜູ້ໃຫ້ການສິດສອນນຳໃຊ້ຫົວຂໍ້ບົດສອບເສັງເພື່ອໃຫ້ການຝຶກແອບແກ່ນັກຮຽນ
- ຜູ້ໃຫ້ການສິດສອນປ່ຽນຄຳຕອບຂອງນັກຮຽນຫຼືປ່ຽນບົດສອບເສັງ
- ຜູ້ໃຫ້ການສິດສອນບໍ່ສາມາດປ້ອງກັນອຸປະກອນການສອບເສັງ ຫຼື ສະພາບແວດລ້ອມໃນການສອບເສັງ ເພື່ອປ້ອງກັນການສໍ້ໂກງ

## ຜົນໄດ້ຮັບຈາກການສໍ້ໂກງແມ່ນຫຍັງ?

ມີຜົນສະຫລຸບໃນການລາຍງານຄະແນນໃຫ້ແກ່ນັກຮຽນ, ຄອບຄົວ ແລະ ໂຮງຮຽນ ທີ່ບໍ່ສະເໜີຜົນສຳເລັດຂອງນັກຮຽນ ແຕ່ລະຄົນ. ຜົນສະຫລຸບທີ່ສຳຄັນທີ່ສຸດຈຳນວນໜຶ່ງ ປະກອບດ້ວຍ:

- ນັກຮຽນຖືກຊັກນຳໄປໃນທາງທີ່ຜິດກ່ຽວກັບການຮຽນຮູ້ຂອງພວກເຂົາ.
- ຜົນໄດ້ຮັບທີ່ຜິດພາດຖືກລາຍງານໄປຫາພໍ່ແມ່ ແລະ ບຸກຄົນອື່ນທີ່ໃຊ້ຄະແນນຂອງການສອບເສັງ ໃນການ ໃຫ້ຄຳຕັດສິນ.
- ນັກຮຽນອາດຈະຖືກບັນຈຸເຂົ້າຢູ່ໃນໂປຣແກຣມການສຶກສາທີ່ພວກເຂົາບໍ່ໄດ້ກະກຽມມາກ່ອນ ແລະ ອາດຈະຂາດໂອກາດໃນການໄດ້ຮັບຄຳແນະນຳທີ່ຈຳເປັນ.
- ຊ່ອງຫວ່າງໃນການໄດ້ຮັບຜົນສຳເລັດອາດຈະບໍ່ຖືກກຳນົດ ແລະ ອຸປະກອນຕ່າງໆ ຂອງໂຮງຮຽນ ອາດຈະໄດ້ຮັບການຈັດສັນທີ່ບໍ່ເໝາະສົມ.
- ຂໍ້ມູນທີ່ບໍ່ຖືກຕ້ອງໄດ້ຖືກລາຍງານໄປສູ່ມະຫາຊົນກ່ຽວກັບຄຸນນະພາບຂອງໂຮງຮຽນ.
- ຄວາມໄວ້ໃຈຂອງມະຫາຊົນໃນຄວາມສາມາດຂອງການວັດແທກຄວາມຖືກຕ້ອງຂອງຜົນສຳເລັດຂອງນັກຮຽນໃນໂປຣແກຣມການປະເມີນຜົນໄດ້ຖືກທຳລາຍ.

## ການສໍ້ໂກງສາມາດໄດ້ຮັບການປ້ອງກັນໄດ້ແນວໃດ?

ສ້າງ ແລະ ຮັກສາວັດທະນະທຳຂອງຄວາມຊື່ສັດທາງດ້ານການສຶກສາພາຍໃນບັນດາໂຮງຮຽນຂອງມິນນີໂຊຕາ ແມ່ນກຸນແຈສຳຄັນໃນການປ້ອງກັນການສໍ້ໂກງ. ນິຍາມຂອງຄວາມສົມບູນແບບດ້ານການສຶກສາຈະພົບເຫັນຢູ່ລະບຽບການ ຂອງໂຮງຮຽນ ຫຼືເຂດ ຫຼືຄູ່ມືຂອງນັກຮຽນ ແລະ ອາດຈະມີຄວາມແຕກຕ່າງກັນເລັກນ້ອຍ. ໂດຍທົ່ວໄປແລ້ວຈະມີຈຸດທີ່ສຳຄັນສອງສາມຈຸດ:

- ຄວາມສົມບູນແບບດ້ານການສຶກສາແມ່ນຄວາມຊື່ສັດ ແລະ ທຶນການສຶກສາໃນການຮັບຜິດຊອບ.
- ຜົນງານຂອງການສຶກສາທັງໝົດ ຄວນຈະໄດ້ມາຈາກຄວາມພະຍາຍາມຂອງນັກຮຽນແຕ່ລະຄົນ.

ມີພຽງແຕ່ບັນດາໂຮງຮຽນ ແລະ ເຂດທີ່ຕ້ອງການຄວາມສົມບູນແບບດ້ານການສຶກສາຈາກນັກຮຽນ ໃນການຮ່ຳຮຽນຂອງ ພວກເຂົາ, ພວກເຂົາຄວນຈະຄາດຫວັງວ່າ ນັກຮຽນມີຄວາມຊື່ສັດ ເມື່ອພວກເຂົາເຮັດການປະເມີນຜົນໃນທົ່ວລັດ ຫຼື ການປະເມີນຜົນທີ່ໄດ້ມາດຕະຖານຕ່າງໆ. ເຂດສາມາດສະໜັບສະໜູນຄວາມສົມບູນແບບດ້ານການສຶກສາ ແລະ ດ້ານຄະແນນການ ສອບເສັງໂດຍ:

- ສື່ສານວ່າຂໍ້ມູນຂອງການປະເມີນຜົນໄດ້ຖືກນຳໃຊ້ໄດ້ແນວໃດ ແລະ ເປັນຫຍັງເຫດຜົນຂອງຄະແນນການສອບເສັງຈຶ່ງມີຄວາມສຳຄັນ.
- ສ້າງຄວາມຄາດຫວັງສຳລັບຄວາມຊັດເຈນຂອງຄວາມຊື່ສັດ.
- ຮັບປະກັນວ່ານັກຮຽນ ແລະ ພະນັກງານ ຮູ້ຈັກຜົນສະຫລຸບຂອງຄວາມປະພຶດທີ່ຜິດ.
- ນຳໃຊ້ຜົນສະຫລຸບສຳລັບຄວາມປະພຶດທີ່ຜິດຢ່າງສອດຄ່ອງກັນ.
- ຕ້ອງການໃຫ້ນັກຮຽນ ແລະ ພະນັກງານເຊັນໃສ່ເພື່ອຮັບປະກັນວ່າ ພວກເຂົາຈະເຄົາລົບຕໍ່ນະໂຍບາຍຄໍ້າປະກັນ ການສອບເສັງ.

ເຖິງວ່າເຫັນດີກັບລະບຽບການອາດຈະບໍ່ປ້ອງກັນບຸກຄົນຈຳນວນໜ້ອຍໜຶ່ງຊຶ່ງເປັນຜູ້ທີ່ຖືກລະບຸວ່າສໍ້ໂກງ, ມັນແມ່ນວິທີການທີ່ມີປະສິດທິພາບສຳລັບການສື່ສານໃຫ້ນັກຮຽນ ແລະ ຜູ້ໃຫ້ການສຶກສາໃນຄວາມຄາດຫວັງ ສຳລັບຄວາມປະພຶດ ແລະໃຫ້ການສະໜັບສະໜູນຕໍ່ຄວາມຊື່ສັດຂອງການສຶກສາ.

ບັນດານະໂຍບາຍ ແລະ ຂະບວນການຕ່າງໆສຳລັບການດຳເນີນການປະເມີນຜົນ ໃນທົ່ວລັດຂອງມິນນີໂຊຕາ ແມ່ນຖືກລະບຸຢູ່ໃນ*ຄູ່ມືກ່ຽວກັບຂະບວນການໃນການປະເມີນຜົນຂອງມິນນີໂຊຕາ (Procedures Manual for the Minnesota Assessments)*, ຄູ່ມືໃນການບໍລິຫານການສອບເສັງແລະໃນການຝຶກອົບຮົມແລະການສອນພິເສດ. ບັນດາເຂດ ແລະ ໂຮງຮຽນຕ້ອງຮັບປະກັນວ່ານັກຮຽນ, ຜູ້ໃຫ້ການສຶກສາ ແລະ ພະນັກງານເຂົ້າໃຈເງື່ອນໄຂສຳລັບການຮັບປະກັນການສອບ ເສັງ.**ການລະເມີດຕໍ່ລະບຽບການດ້ານຄວາມປອດໄພສາມາດເກີດຂຶ້ນໄດ້ງ່າຍດາຍ ຍ້ອນວ່າ ຄົນບໍ່ຮູ້ຈັກ ຫຼື ເຂົ້າໃຈນະ ໂຍບາຍ ແລະ ຂະບວນການ.** ຜູ້ໃຫ້ການສຶກສາສາມາດເຮັດໃຫ້ມີຄວາມສ່ຽງຕໍ່ຄວາມຊື່ສັດຂອງຄະແນນການສອບເສັງ ໂດຍບໍ່ເຈດຕະນາທີ່ຈະເຮັດສິ່ງດັ່ງກ່າວນັ້ນເມື່ອຈຸດປະສົງຂອງພວກເຂົາອາດຈະແມ່ນເພື່ອຊ່ວຍຫຼືໄດ້ຮັບຜົນປະໂຫຍດຈາກ "ຄວາມສຳຄັນດ້ານຄວາມສາມາດຂອງການສິດສອນ." ເຖິງຢ່າງໃດກໍ່ຕາມ, ບອກໃຫ້ນັກຮຽນເບິ່ງຫົວບົດຄຳຕອບຂອງການ ສອບເສັງອື່ນ ທີ່ບໍ່ຖືກຕ້ອງ ຫຼື ບອກໃບ້ອື່ນໆ ໃຫ້ຄຳຕອບທີ່ຖືກຕ້ອງແມ່ນຄວາມປະພຶດທີ່ບໍ່ຖືກຕ້ອງ ແລະ ຕ້ອງການໃຫ້ ຄະແນນ ສອບເສັງຂອງນັກຮຽນໄດ້ຖືກຫັກລ້າງ ແລະ ການລາຍງານຂອງຄວາມປະພຶດທີ່ບໍ່ຖືກຕ້ອງທີ່ຄາດໄວ້ຈະຖືກ ສະໜອງໃຫ້ກັບ MDE.

## ຈະເກີດຫຍັງຂຶ້ນເມື່ອຜູ້ໃຫ້ການສຶກສາມີຄວາມປະພຶດຜິດໃນການສອບເສັງທົ່ວລັດໄດ້ຮັບການຄາດຫວັງ ຫຼື ຢັ້ງຢືນ?

ການກ່າວຫາ ແລ ະຫຼັກຖານພິສູດຄວາມປະພຶດຜິດຂອງຜູ້ໃຫ້ການສຶກສາຕ້ອງຖືກລາຍງານໃຫ້ MDE, ແລະ MDE ຕ້ອງການໃຫ້ຜູ້ດຳເນີນການຂອງເຂດພິຈາລະນາຄວາມຈິງຂອງຄວາມປະພຶດຜິດ ທີ່ໄດ້ຖືກລາຍງານຕາມລຳດັບ. ຖ້າຫາກຜູ້ບໍລິຫານຂອງເຂດ ມີຄວາມກ່ຽວຂ້ອງ ຫຼື ຢູ່ໃນສະຖານະການອື່ນທີ່ມີເຫດຜົນອັນສົມຄວນ ຜູ້ສຳຫລວດພາຍນອກອາດຈະຖືກຈ້າງໃຫ້ດຳເນີນການສຳຫລວດແບບອິດສະລະ. ການຮ້ອງຮຽນກ່ຽວກັບຄວາມປະພຶດຜິດໄປຫາຄະນະກຳມະການໃນການສິດສອນມິນນີໂຊຕາ (Minnesota Board of Teaching) ຫຼື ຄະນະກຳມະການຜູ້ບໍລິຫານໂຮງຮຽນ (Board of School Administrators) ອີງໃສ່ຫ້ອງການໃຫຍ່ຂອງທະນາຍຄວາມ (Attorney General) ສຳລັບການປະເມີນ ແລະ ການສຳຫລວດ.

ອີງຕາມລະບຽບການຂອງມິນນີໂຊຕາ (Minnesota Statute) 122A.20 Subd. 1(a), ຄະນະກຳມະການ ສິດສອນ ຫຼື ຄະນະກຳມະການຜູ້ບໍລິຫານໂຮງຮຽນ, ຄະນະໃດກໍ່ຕາມທີ່ຂອບເຂດອຳນາດຂອງສານໄປເຖິງອາດຈະດຳເນີນ ການຮ້ອງຮຽນ ເພື່ອຕັດສິນວ່າການກະທຳດ້ານລະບຽບວິໄນຕໍ່ຕ້ານໃບຍັ້ງຢືນ ແມ່ນໄດ້ຮັບການຮັບຮອງສຳລັບການລາຍງານ ທີ່ໄດ້ຮັບການຍັ້ງຢືນກ່ຽວກັບຄວາມປະພຶດທີ່ບໍ່ຖືກຕ້ອງຂອງຜູ້ໃຫ້ການສຶກສາ. ຜູ້ໃຫ້ການສຶກສາໄດ້ພົບວ່າ ມີສ່ວນພົວພັນກັບ ການປະພຶດຜິດ ເຮັດໃຫ້ມີການອະນຸມັດ ທີ່ອາດຈະລວມມີການຕຳໜິ ແລະ ໃບຍັ້ງຢືນຂອງພວກເຂົາທີ່ຢູ່ໃນຂັ້ນທົດລອງ, ໄດ້ຮັບການລະງັບຊົ່ວຄາວ ຫຼື ຖອດຖອນ. ເຂດຂອງໂຮງຮຽນທີ່ສິ້ນສຸດການຈ້າງງານຜູ້ໃຫ້ການສຶກສາສຳລັບການ ລະເມີດລະບຽບການຂອງຈາລິຍະທຳ ຖືກຮຽກຮ້ອງໃຫ້ລາຍງານການສິ້ນສຸດໄປຫາຄະນະກຳມະການ.

## ຂະບວນການສຳລັບການລາຍງານການລະເມີດທີ່ສົງໃສຂອງລະບຽບການຮັບປະກັນການສອບເສັງແມ່ນຫຍັງ?

ຫຼັກສູດຂອງການດຳເນີນງານທົ່ວໄປແມ່ນເພື່ອລາຍງານການລະເມີດນະໂຍບາຍຂອງການຮັບປະກັນການສອບເສັງໄປຫາຜູ້ ປະສານງານໃນການປະເມີນຜົນຂອງໂຮງຮຽນ (School Assessment Coordinator) ຫຼື ຜູ້ປະສານງານໃນການປະເມີນ ຜົນຂອງເຂດ (District Assessment Coordinator) ຈາກນັ້ນບຸກຄົນດັ່ງກ່າວຈະສົ່ງແຈ້ງການໃນການຮັບປະກັນການ ສອບເສັງ (Test Security Notification) ໄປຫາ MDE ເພື່ອດຳເນີນການທີ່ເໝາະສົມ. ການລາຍງານກ່ຽວກັບການລະເມີດ ສາມາດໄດ້ຮັບການລາຍງານໂດຍກົງ ແລະ ແບບບໍ່ແຈ້ງຊື່ໄປຫາ MDE ໂດຍການໃຫ້ຂໍ້ມູນຜ່ານສາຍດ່ວນຄຳແນະນຳ ໃນການສອບເສັງໃນທົ່ວລັດຂອງມິນນີໂຊຕາ (Minnesota Statewide Test Security Tip Line). ໄປທີ່ Minnesota Statewide Test Security Tip Line ຢູ່ເວັບໄຊຂອງ MDE (ເຂົ້າໄປທີ່ MDE > Districts, Schools and Educators >Statewide Testing).